ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 1016 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 01 ມິຖຸນາ 2020

## ຫນັງສືແຈ້ງເຊີນປະມູນ

1. ກະຊວງການເງິນ, ຫ້ອງການກະຊວງ ຈະໄດ້ດຳເນີນການຈັດຊື້-ຈັດຈ້າງ ບໍລິສັດສະໜອງອຸປະກອນຮັກສາຄວາມປອດໄພ ໃຫ້ກະຊວງການເງິນ ໂດຍນຳໃຊ້ງົບປະມານບ້ວງທັນເປັນທັນສະໄໝຂອງກະຊວງການເງິນ ປີ 2020 ດ້ວຍການປະມູນ ເປີດກວ້າງພາຍໃນ.
2. ຫ້ອງການກະຊວງການເງິນ ຂໍເຊີນບັນດາ ບໍລິສັດ/ວິສາຫະກິດ ທີ່ສົນໃຈ ແລະ ມີຄວາມເຫມາະສົມ ເຂົ້າຍື່ນຊອງປະມູນ ສຳລັບການສະໜອງອຸປະກອນຮັກສາຄວາມປອດໄພ ຂອງກະຊວງການເງິນ.
3. ການປະມູນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນ, ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ບໍລິສັດ/ວິສາຫະກິດ ທີ່ມີຄຸນວຸດທິ ແລະ ຄວາມເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດຫມາຍ ທີ່ກ່ຽວພັນກັບໂທລະຄົມມະນາຄົມ ແລະ ການສື່ສານ, ຫນັງສືຢັ້ງຢືນການເສຍພັນທະສ່ວຍສາອາກອນປະຈຳປີ 2019, ຖ້າບໍ່ມີ ໃຫ້ພິມໃບແຈ້ງມອບອາກອນທັງໝົດ ໃນປີ 2019 ມາແທນ.
5. ບໍລິສັດ ທີ່ມີຄຸນນະວຸດທິທີ່ເຫມາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ກະຊວງການເງິນ, ໂທ: 021 417766/020 55553300 ແລະ ກວດກາເບິ່ງເອກະສານປະມູນ ໃນໂມງລັດຖະການ.
6. ເລີ້ມຂາຍຊອງປະມູນແຕ່ວັນທີ 2-9 ມິຖຸນາ 2020, ປິດຮັບຊອງ ແລະ ດຳເນີນການເປີດຊອງໃນ ເວລາ 14:00 ໂມງຂອງດຽວກັນ (ວັນທີ 9 ມິຖຸນາ 2020), ຊອງເອກະສານຂາຍໃນລາຄາ 500.000 ກີບ (ຫ້າແສນກີບ), ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.

ຫົວໜ້າຫ້ອງການກະຊວງ

ສົມບູນ ອິນທະປັດຖາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 1017 /ຫກງ

ນະຄອນຫລວງວຽງຈັນ, ວັນທີ 01 ມິຖຸນາ 2020

# ເງື່ອນໄຂແນະນຳຜູ້ເຂົ້າຮ່ວມປະມູນ

ບໍລິສັດທີ່ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງ ການສະໜອງອຸປະກອນຮັກສາຄວາມປອດໄພ ຂອງກະຊວງການເງິນ ຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

**ເງື່ອນໄຂທົ່ວໄປ**

1. ເປັນບໍລິສັດ ທີ່ມີໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບໂທລະຄົມມະນາຄົມ ແລະ ການສື່ສານຕາມລະບຽບກົດໝາຍ ຂອງ ສປປ ລາວ;
2. ຕ້ອງມີໃບທະບຽນວິສາຫະກິດ;
3. ໃບຢັ້ງຢືນການມອບພັນທະສ່ວຍສາອາກອນປະຈຳປີ 2019, ຖ້າບໍ່ມີ ໃຫ້ພິມໃບແຈ້ງມອບອາກອນທັງໝົດໃນປີ 2019 ມາແທນ;
4. ມີທຶນຈົດທະບຽນ 400 ລ້ານກີບຂຶ້ນໄປ;
5. ໃບຢັ້ງຢືນຖານະດ້ານການເງິນຈາກທະນາຄານ ປີ 2017, ປີ 2018 ແລະ ປີ 2019 (3 ປີຍ້ອນຫຼັງ);
6. ມີໂຄງຮ່າງການຈັດຕັ້ງຂອງບໍລິສັດ ພ້ອມດ້ວຍຈຳນວນບຸກຄະລາກອນທີ່ມີປະສົບການ ໃນການຕິດຕັ້ງອຸປະກອນ ຮັກສາຄວາມປອດໄພ ທີ່ພຽງພໍ ຢ່າງໜ້ອຍ 7 ທ່ານຂຶ້ນໄປ (CV ຄັດຕິດມາພ້ອມ);
7. ມີສັນຍາໃນການຕິດຕັ້ງອຸປະກອນຮັກສາຄວາມປອດໄພ ທີ່ໄດ້ປະຕິບັດຜ່ານມາ ແລະ ມີມູນຄ່າສັນຍາລະ 100 ລ້ານກີບ ຂຶ້ນໄປ ຢ່າງໜ້ອຍ 3 ສັນຍາ ຄັດຕິດມາພ້ອມ (ສັນຍາ 3 ປີຍ້ອນຫຼັງ);
8. ຕ້ອງປະກອບເອກະສານປະມູນຕາມແບບຟອມທີ່ເຈົ້າຂອງໂຄງການກຳນົດໃຫ້ຄົບຖ້ວນ;
9. ບໍລິສັດທີ່ບໍ່ຜ່ານເງື່ອນໄຂ ແມ່ນຈະບໍ່ໄດ້ຮັບການພິຈາລະນາດ້ານລາຄາ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂແນະນຳຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

ຫົວໜ້າຫ້ອງການ

ສົມບຸນ ອິນທະປັດຖາ